ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ການບໍລິການແລກປ່ຽນເງິນທີ່ຖືກຕ້ອງ ແລະ ຂໍ້ຫ້າມ, ມາດຕະການຕໍ່ຜູ້ລະເມີດໃນການປັ່ນປ່ວນອັດຕາແລກປ່ຽນ

ການຄຸ້ມຄອງອັດຕາແລກປ່ຽນແມ່ນໜຶ່ງໃນເຄື່ອງມືທາງດ້ານນະໂຍບາຍເງິນຕາທີ່ທະນາຄານແຫ່ງ ສປປ ລາວ ໄດ້ນຳໃຊ້ເຂົ້າໃນການຄຸ້ມຄອງສະຖຽນລະພາບທາງດ້ານເງິນຕາຂອງປະເທດ. **ຈຸດປະສົງ**ຂອງການຄຸ້ມຄອງອັດຕາແລກປ່ຽນແມ່ນ ເພື່ອແນໃສ່ໃຫ້ມີສະຖຽນລະພາບ, ສ້າງຄວາມເຊື່ອໝັ້ນ ແລະ ເງື່ອນໄຂສະດວກໃຫ້ແກ່ການຄ້າ, ການລົງທຶນຂອງຜູ້ປະກອບການຕ່າງໆ ໃນແງ່ການຄ້າສົ່ງອອກ ແລະ ນຳເຂົ້າ, ໃນກໍລະນີຄ່າເງິນກີບຫາກແຂງຄ່າເກີນໄປເມື່ອທຽບໃສ່ເງິນຕາຕ່າງປະເທດ ຈະເຮັດໃຫ້ລາຄາສິນຄ້າທີ່ສົ່ງອອກສູງຂຶ້ນບໍ່ສາມາດແຂ່ງຂັນໄດ້ດີ, ກົງກັນຂ້າມຖ້າເງິນກີບຫາກອ່ອນຄ່າຫຼາຍເກີນໄປເມື່ອທຽບໃສ່ເງິນຕາຕ່າງປະເທດ ຈະເຮັດໃຫ້ຕົ້ນທຶນໃນການນຳເຂົ້າສິນຄ້າຂອງຫົວໜ່ວຍທຸລະກິດ ແລະ ຜູ້ຊົມໃຊ້ສິນຄ້ານຳເຂົ້າແມ່ນສູງຂຶ້ນຍ້ອນການອ່ອນຄ່າອັດຕາແລກປ່ຽນສົ່ງຜ່ານຊ່ອງທາງລາຄາ (Exchange rate push through). ດັ່ງນັ້ນ ການຄຸ້ມຄອງອັດຕາແລກປ່ຽນທີ່ມີປະສິດທິພາບຈະສົ່ງຜົນໃຫ້ສິນຄ້ານຳເຂົ້າຢູ່ໃນລະດັບທີ່ຄວບຄຸມໄດ້ ຊຶ່ງສະແດງອອກໂດຍບໍ່ກະທົບລາຄາພາຍໃນລະດັບອັດຕາເງິນເຟີ້.

ຫຼັງຈາກການແຜ່ລະບາດຂອງພະຍາດໂຄວິດ 19 (COVID-19) ໄດ້ເຮັດໃຫ້ວິຖີຊີວິດການເປັນຢູ່ຂອງປະຊາຊົນລາວມີການປ່ຽນແປງ ແລະ ຕ້ອງໄດ້ປັບຕົວເຂົ້າກັບສະພາບປົກກະຕິໃໝ່ ຫຼື New normal ໃນຂະນະທີ່ການຜະລິດພາຍໃນບໍ່ເຂັ້ມແຂງການຄ້າກັບຕ່າງປະເທດກໍ່ສະລໍຕົວລົງ, ເຮັດໃຫ້ມີການນຳເຂົ້າສິນຄ້າເປັນສ່ວນຫຼາຍ ເຊິ່ງສົ່ງຜົນໃຫ້ເກີດມີຄວາມຕ້ອງການເງິນຕາຕ່າງປະເທດແມ່ນສູງຂຶ້ນ **ຕົວຢ່າງ ສິນຄ້າຍຸດທະສາດທີ່ສາມາດສົ່ງຜົນກະທົບໂຄງສ້າງທາງດ້ານຕົ້ນທຶນຂອງການຜະລິດສິນຄ້າ ແລະ ການໃຫ້ບໍລິການພາຍໃນປະເທດ,** ຄຽງຄູ່ກັນນັ້ນມູນຄ່າການສົ່ງອອກທີ່ເປັນປັດໄຈໃນການນຳເອົາເງິນຕາຕ່າງປະເທດເຂົ້າມາ ພັດບໍ່ສົມຄູ່ກັບກະແສເງິນຕາຕ່າງປະເທດທີ່ໄຫຼອອກ ແລະ ສຸດທ້າຍໄດ້ເຮັດໃຫ້ເກີດພາວະເງິນເຟີ້ເລີ່ມກໍ່ໂຕຂຶ້ນ ແລະ ເພີ່ມທະວີຄວາມຮຸນແຮງຂຶ້ນເປັນລຳດັບ. ເພື່ອເປັນການແກ້ໄຂບັນຫາດັ່ງກ່າວ ທະນາຄານແຫ່ງ ສປປ ລາວ ກໍ່ຄືລັດຖະບານ ແມ່ນໄດ້ສຸມກຳລັງ ແລະ ສະຕິປັນຍາໃນການຈັດຕັ້ງປະຕິບັດຫຼາຍມາດຕະການເຊັ່ນ: ປັບອັດຕາດອກເບ້ຍເງິນຝາກແຮຝາກບັງຄັບສະກຸນເງິນກີບ ຈາກ 4% (ປີ 2020) ມາເປັນ 5,50% (ປີ 2023), ດູດເງິນອອກຈາກເສດຖະກິດ ໂດຍການຂາຍພັນທະບັດ ທຫລ ເປັນຈຳນວນ 2 ຄັ້ງ ໃຫ້ແກ່ນອນຊົນທີ່ບໍ່ແມ່ນສະຖາບັນການເງິນ, ລວມເປັນເງິນທັງໝົດຈຳນວນ 7.000.000.000.000 ກີບ (ເຈັດພັນຕື້ກີບ) ພ້ອມທັງຄຸ້ມຄອງການແລກປ່ຽນເງິນຕາຕ່າງປະເທດດ້ວຍການອອກ **ແຈ້ງການຢຸດຕິການອະນຸຍາດດຳເນີນທຸລະກິດແລກປ່ຽນຂອງຮ້ານແລກປ່ຽນເງິນຕາຕົວແທນຂອງທະນາຄານທຸລະກິດ, ສະບັບເລກທີ 01/ທຫລ, ລົງວັນທີ 13 ມັງກອນ 2023** ເພື່ອຮັບປະກັນການແລກປ່ຽນເງິນຕາຊະຊາຍ. ມາຮອດປະຈຸບັນ, ກໍຍັງມີບາງກຸ່ມຄົນ ຫຼື ນິຕິບຸກຄົນຈຳນວນໜຶ່ງຍັງມີການສວຍໃຊ້ຄວາມຊິນເຄີຍນຳລູກຄ້າຂອງຕົນ ແລະ ມີການບໍລິການແລກ ປ່ຽນເງິນທີ່ບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງໃຫ້ແກ່ສັງຄົມ ແລະ ມີການໂຄສະນາແລກປ່ຽນເງິນຕາຜ່ານພາຫະນະສື່ສານທາງອອນລາຍຕ່າງໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ

ລະບຽບການທີ່ກຳນົດໄວ້, ທະນາ ຄານແຫ່ງ ສປປ ລາວ ແມ່ນໄດ້ລົງຕິດຕາມ ແລະ ປະສານສົມທົບກັບກະຊວງປ້ອງກັນຄວາມສະຫງົບໃນການປະຕິບັດມາດຕະການທາງກົດໝາຍ ແລະ ໄດ້ອອກແຈ້ງການຫຼາຍສະບັບ ໂດຍສະເພາະແຈ້ງການຂອງຫ້ອງການທະນາຄານແຫ່ງ ສປປ ລາວ **ສະບັບເລກທີ 109/ຫກ, ລົງວັນທີ 24 ເມສາ 2023 ກ່ຽວກັບການເພີ່ມທະວີມີສະຕິລະວັງໂຕໃນການແລກປ່ຽນເງິນນຳບຸກຄົນ ແລະ ນິຕິບຸກຄົນທີ່ບໍ່ໄດ້ຮັບອະນຸຍາດແລກປ່ຽນເງິນຕາຈາກທະນາຄານແຫ່ງ ສປປ ລາວ.** ຊຶ່ງເຫດການທີ່ກ່າວມານັ້ນໄດ້ສ້າງຄວາມສັບສົນໃຫ້ແກ່ສັງ ຄົມ ແລະ ເປັນການປັ່ນປ່ວນຂອງກຸ່ມຄົນທີ່ບໍ່ຫວັງດີກຸ່ມໃດໜຶ່ງທີ່ບໍ່ໃຫ້ຄວາມຮ່ວມມືນຳພາກລັດໃນການຄຸ້ມຄອງເງິນຕາຕ່າງປະເທດຂອງ ສປປ ລາວ ໃຫ້ກັບເຂົ້າສູ່ລະບົບການຈໍລະຈອນຂອງທະນາຄານຢ່າງເປັນປົກກະຕິ.

ດ້ວຍເຫດນີ້ ເພື່ອເປັນການຊີ້ແຈງໃຫ້ແກ່ສັງຄົມກໍຄື: ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ, ພະນັກງານ, ທະຫານ ແລະ ຕຳຫຼວດ, ຕະຫຼອດຮອດຜູ້ທີ່ອາໃສຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ ໄດ້ຮັບຊາບເພີ່ມເຕີມ ແລະ ລຸດຜ່ອນທາງສຽງ ແລະ ຄວາມວິຕົກກັງວົນຂອງສັງຄົມ ກ່ຽວກັບແລກປ່ຽນເງິນທີ່ຖືກຕ້ອງ **ຊຶ່ງອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ເລກທີ 15/ສພຊ, ວັນທີ 07 ກໍລະກົດ 2022 ໃນບົດຄວາມນີ້ຈະສະຫຼຸບເອົາຂໍ້ມູນທີ່ຕິດພັນກັບລະບອບອັດຕາແລກປ່ຽນ, ການບໍລິການແລກປ່ຽນເງິນຕາ, ຂໍ້ຫ້າມທົ່ວໄປ, ມາດຕະການຕໍ່ຜູ້ລະເມີດ** ຊຶ່ງມີລາຍລະອຽດ ດັ່ງລຸ່ມນີ້:

**1. ລະບອບອັດຕາແລກປ່ຽນ:** ສປປ ລາວ ນຳໃຊ້ລະບອບອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ທີ່ຈັດຕັ້ງປະຕິບັດໂດຍທະນາຄານແຫ່ງ ສປປ ລາວ ໃນການກຳນົດອັດຕາແລກປ່ຽນອ້າງອີງບົນພື້ນຖານຄາດໝາຍມະຫາພາກດ້ານເງິນຕາໃນແຕ່ລະໄລຍະ ພ້ອມທັງເປັນຜູ້ກຳນົດສະກຸນເງິນຕາຕ່າງປະເທດທີ່ສາມາດນຳໃຊ້ ແລະ/ຫຼື ຊື້-ຂາຍເງິນຕາຢູ່ ສປປ ລາວ ໃນແຕ່ລະໄລຍະ;

**2. ການບໍລິການແລກປ່ຽນເງິນຕາ:** ທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ ເທົ່ານັ້ນ ທີ່ສາມາດໃຫ້ບໍລິການແລກປ່ຽນເງິນຕາ ຊຶ່ງຕ້ອງປະຕິບັດອັດຕາແລກປ່ຽນຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ. ການແລກປ່ຽນເງິນຕາຕ່າງປະເທດຈາກສະກຸນໜຶ່ງໄປເປັນສະກຸນອື່ນ ຕ້ອງດຳເນີນຜ່ານການແລກປ່ຽນເປັນເງິນກີບເສຍກ່ອນ. ສຳລັບການກຳນົດກຳນົດນະໂຍບາຍ, ຫຼັກການ ແລະ ລະບຽບການ ລວມທັງຂອບເຂດການເຄື່ອນໄຫວກ່ຽວກັບການໃຫ້ບໍລິການແລກປ່ຽນເງິນຕາແມ່ນຄວາມຮັບຜິດຊອບຂອງ ທະນາຄານແຫ່ງ ສປປ ລາວ;

**3. ຂໍ້ຫ້າມທົ່ວໄປ:** ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຫ້າມມີພຶດຕິກຳດັ່ງຕໍ່ໄປນີ້: ການນຳໃຊ້ເງິນຕາຕ່າງປະເທດເຂົ້າໃນການຊຳລະ ແລະ/ຫຼື ຮັບຊຳລະ ຢູ່ ສປປ ລາວ ໂດຍບໍ່ສອດຄ່ອງກັບ**ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ເລກທີ 15/ສພຊ, ວັນທີ 07 ກໍລະກົດ 2022** ສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ; ການກຳນົດມູນຄ່າ, ການຕິດປະກາດ ແລະ/ຫຼື ໂຄສະນາລາຄາສິນຄ້າ, ຄ່າບໍລິການ ແລະ ຄ່າອື່ນໆ ເປັນເງິນຕາຕ່າງປະເທດ. ພ້ອມນີ້ຍັງມີການໂຄສະນາ ແລະ/ຫຼື ປະກາດການບໍລິການແລກປ່ຽນເງິນຕາຕ່າງປະເທດ, ການຈັດຝຶກອົບຮົມ, ເຮັດການຕະຫຼາດ ກ່ຽວກັບເງິນຕາຕ່າງປະເທດທຸກຮູບແບບໂດຍຜ່ານຊ່ອງທາງຕ່າງໆ ທັງເຊິ່ງໜ້າ ແລະ ອອນລາຍ; ການປັ່ນປ່ວນອັດຕາແລກປ່ຽນດ້ວຍການສ້າງຂ່າວປອມ ຫຼື ບິດເບືອນຂໍ້ມູນຂ່າວສານກ່ຽວກັບບັນດາປັດໄຈທີ່ຈະກະທົບຕໍ່ອັດຕາແລກປ່ຽນ. ພ້ອມນັ້ນຍັງມີຂໍ້ຫ້າມໃນການກຳນົດ ແລະ ຕິດປະກາດອັດຕາແລກປ່ຽນ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ; ຊຳລະຄ່າສິນຄ້າ ແລະ ບໍລິການຢູ່ພາຍໃນ ແລະ ລະຫວ່າງປະເທດ ດ້ວຍການນຳໃຊ້ລະບົບການຊຳລະທີ່ບໍ່ສອດຄ່ອງກັບກົດໝາຍຂອງ ສປປ ລາວ; ໃຫ້ບໍລິການເງິນຕາຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ. ນອກຈາກນີ້, ຍັງຫ້າມໃຊ້ບໍລິການເງິນຕາຕ່າງປະເທດ ເປັນຕົ້ນແລກປ່ຽນເງິນຕາ, ໂອນເງິນກັບບຸກຄົນ, ນິຕິບຸກຄົນອື່ນ ທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ; ການເປີດ ແລະ ນຳໃຊ້ບັນຊີເງິນຝາກຢູ່

ຕ່າງປະເທດ ໂດຍບໍ່ສອດຄ່ອງກັບກົດໝາຍ; ການນຳໃຊ້ບັນຊີເງິນຝາກອື່ນທີ່ບໍ່ແມ່ນບັນຊີເງິນຝາກສະເພາະເພື່ອຊຳລະການຄ້າ, ການບໍລິການ ແລະ ການລົງທຶນກັບຕ່າງປະເທດ; ການຮັກສາລາຍຮັບຈາກການສົ່ງອອກສິນຄ້າ, ການບໍລິການ ແລະ ການລົງທຶນໄວ້ຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ; ການບໍ່ສະເໜີຂໍຢັ້ງຢືນ ຫຼື ຢັ້ງຢືນເກີນເວລາທີ່ກຳນົດ ໃນການນຳທຶນເຂົ້າ ສປປ ລາວ ນຳທະນາຄານແຫ່ງ ສປປ ລາວ; ການນຳທຶນອອກ ສປປ ລາວ ໄປລົງທຶນຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ; ການກູ້ຢືມລະຫວ່າງປະເທດ ໂດຍບໍ່ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ. ນອກຈາກນີ້ ຍັງມີພຶດຕິກຳອື່ນໆອີກທີ່ຖືກເກືອດຫ້າມ ເຊັ່ນ: ການບໍ່ແຈ້ງຕໍ່ເຈົ້າໜ້າທີ່ພາສີທີ່ກ່ຽວຂ້ອງ ໃນກໍລະນີນຳເງິນຕາທີ່ເປັນເງິນສົດເຂົ້າ ສປປ ລາວ ເກີນຈຳນວນທີ່ກຳນົດໄວ້; ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ແລະ ບໍ່ແຈ້ງຕໍ່ເຈົ້າໜ້າທີ່ພາສີທີ່ກ່ຽວຂ້ອງ ໃນກໍລະນີທີ່ນຳເງິນຕາເປັນເງິນສົດອອກ ສປປ ລາວ ເກີນຈຳນວນທີ່ໄດ້ກຳນົດໄວ້; ການປະຕິເສດການສະໜອງຂໍ້ມູນ ຫຼື ສະໜອງຂໍ້ມູນບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ກ່ຽວກັບການເຄື່ອນໄຫວເງິນຕາຕ່າງປະເທດ ແລະ ບໍ່ໃຫ້ຄວາມຮ່ວມມື ຫຼື ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການເຄື່ອນໄຫວວຽກງານຄຸ້ມຄອງເງິນຕາຕ່າງປະເທດ, ປະໝາດເລີ່ນເລີ້ ຫຼື ເມີນເສີຍຕໍ່ການຈັດຕັ້ງປະຕິບັດວຽກງານເງິນຕາຕ່າງປະເທດ ແລະ ພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ;

**4. ມາດຕະການຕໍ່ຜູ້ລະເມີດ: ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ເລກທີ 15/ສພຊ, ວັນທີ 07 ກໍລະກົດ 2022, ກົດໝາຍ ແລະ ລະບຽບການອື່ນໆ** ທີ່ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ, ທີ່ສ້າງຄວາມເສຍຫາຍແກ່ລັດ ແລະ ສັງຄົມຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ, ມາດຕະການທາງບໍລິຫານອື່ນໆ, ໃຊ້ແທນຄ່າເສຍຫາຍທາງແພ່ງ ແລະ/ຫຼື ຮັບຜິດຊອບທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ. ສຳລັບການລົງວິໄນ ແລະ ໃຊ້ແທນຄ່າເສຍຫາຍທາງແພ່ງໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວ ຂ້ອງ. **ຕົວຢ່າງ: ບຸກຄົນ ຫຼື ນິຕິບຸກຄົນທີ່ປັ່ນປ່ວນອັດຕາແລກປ່ຽນດ້ວຍການສ້າງຂ່າວປອມ, ບິດເບືອນ, ຂໍ້ມູນຂ່າວສານ ກ່ຽວກັບບັນດາປັດໄຈທີ່ຈະກະທົບຕໍ່ອັດຕາແລກປ່ຽນ, ກຳນົດອັດຕາແລກປ່ຽນ, ຊື້-ຂາຍເງິນຕາໂດຍບໍ່ສອດຄ່ອງກັບລະ ບຽບການຂອງທະນາຄານແຫ່ງ ສປປ ລາວ, ບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ສ້າງຄວາມເສຍຫາຍແກ່ລະບົບເສດ ຖະກິດ, ການເງິນ ແລະ ເງິນຕາຂອງ ສປປ ລາວ ຈະຖືກລົງໂທດຕັດອິດສະລະພາບແຕ່ໜຶ່ງປີຫາຫ້າປີ ແລະ ປັບໃໝແຕ່ 50.000.000 (ຫ້າສິບລ້ານ) ກີບ ຫາ 100.000.000 (ໜຶ່ງຮ້ອຍລ້ານ) ກີບ**. ນອກນີ້ ຍັງມີອີກຫຼາຍມາດຕະການຕໍ່ຜູ້ລະເມີດທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດສະບັບນີ້ ຊຶ່ງສາມາດເຂົ້າອ່ານໄດ້ທາງເວັບໄຊ້ຂອງທະນາ ຄານແຫ່ງ ສປປ ລາວ **www.bol.gov.la**. ດັ່ງນັ້ນ ເພື່ອບໍ່ໃຫ້ຖືກປັບໃໝ່ທາງແພ່ງ ແລະ ອາຍາ ຈຶ່ງຂໍຮຽກຮ້ອງໃຫ້ບັນດາທ່ານບໍ່ວ່າຈະເປັນບຸກຄົນ, ນິຕິບຸກຄົນ ແລະ ອົງກອນສາກົນຕ່າງໆ ທີ່ເຄື່ອນໄຫວພາຍໃນ ສປປ ລາວ ໃຫ້ປະຕິບັດຕາມກົດໝາຍສະບັບນີ້ ແລະ ກົດໝາຍສະບັບອື່ນໆ ທີ່ກ່ຽວຂ້ອງກັບການຄຸ້ມຄອງເງິນຕາຕ່າງປະເທດຢ່າງເຄັ່ງຄັດ ເພື່ອເປັນອີກແຮງຊຸກຍູ້ໃຫ້ແກ່ປະເທດຊາດ ໃນການສ້າງສະຖຽນລະພາບທາງດ້ານເສດຖະກິດຂອງ ສປປ ລາວ.

**ບົດຄວາມໂດຍ: ສອນໄຊ ສີຫາເທບ, ຫ້ອງການທະນາຄານແຫ່ງ ສປປ ລາວ**

# ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ